*ຈັດໂດຍ:*

# ແຜນການປະຊຸມສຳມະນາກ່ຽວກັບ ບົດຮຽນຂອງວຽກງານການສື່ສານໃນຊົນນະບົດຂອງລາວ ເພື່ອປັບປຸງການເຂົ້າເຖິງ ຂໍ້ມູນຂ່າວສານທາງດ້ານກະສິກຳ ແລະ ການຄຸ້ມຄອງຊັບພະຍາກອນທຳມຊາດ ຂອງຊາວກະສິກອນ ແລະ ກຸ່ມຜະລິດ

**ຈະຈັດຂຶ້ນທີ່ ໂຮງແຮມລ້ານຊ້າງ**

**ວັນທີ 31/07 - 01/08/2007**

## ຄວາມເປັນມາ:

ລັດຖະບານ ສປປ ລາວ ປັດຈຸບັນພວມສຸມກຳລັງແຮງເພື່ອດຳເນີນການຫລຸດຜ່ອນຄວາມທຸກຍາກໃນທົ່ວປະເທດ ໂດຍດຳເນີນນະໂຍບາຍເປີດກວ້າງທາງດ້ານເສດຖະກິດໃນເຂດຊົນນະບົດ ແລະ ສຸມໃສ່ເຮັດວຽກໃນລະດັບກຸ່ມບ້ານຫລາຍຂຶ້ນ. ສຳລັບສິ່ງເຫລົ່ານີ້ມີຫລາຍປັດໃຈທີ່ສຳຄັນສຳລັບຊາວກະສິກອນ ຜູ້ທີ່ຈະປ່ຽນຜ່ານຈາກການເຮັດການຜະລິດແບບກຸ້ມຢູ່ກຸ້ມກິນໄປເປັນການຜະລິດເພື່ອຕອບສະໜອງຄວາມຕ້ອງການຂອງຕະຫລາດ. ປະການທີໜຶ່ງ ຊາວນາຜູ້ທີ່ກ້າວເຂົ້າສູ່ເສດຖະກິດຕະຫລາດນັ້ນ ຈະຕ້ອງເຂົ້າເຖິງເຕັກໂນໂລຊີ ແລະ ການປັບປຸງລະບົບການຜະລິດ, ຕະຫລອດຮອດຂໍ້ມູນຂ່າວສານທາງດ້ານການຕະຫລາດ. ອີກປະການໜຶ່ງ, ການເປີດເສດຖະກິດດັ່ງກ່າວມັນໄດ້ເຮັດໃຫ້ມີການແຂ່ງຂັນການນຳໃຊ້ຊັບພະຍາກອນທຳມະຊາດ ແລະ ນຳໃຊ້ທີ່ດິນຫລາຍຂຶ້ນ. ສິ່ງນີ້ ມັນໄດ້ເຮັດໃຫ້ຊາວກະສິກອນບາງກຸ່ມໃນຊົນນະບົດຕົກຢູ່ໃນສະຖານະທີ່ເສຍປຽບ ເນື່ອງຈາກວ່າພວກເຂົາມີຂໍ້ຈຳກັດໃນການເຂົ້າເຖິງຂໍ້ມູນຂ່າວສານຕ່າງໆ ແລະ ລວມທັງຄວາມສາມາດໃນການເຈລະຈາເພື່ອຮຽກຮ້ອງ ສິ່ງຊົດເຊີຍຕໍ່ຊັບພະຍາກອນທີ່ສູນເສຍໄປ.

ເພື່ອສະໜັບສະໜູນຊາວກະສິກອນ ແລະ ກຸ່ມຜະລິດດັ່ງກ່າວ ໃຫ້ມີຄວາມພ້ອມເພື່ອປະເຊີນກັບການປ່ຽນແປງດັ່ງກ່າວທີ່ເກີດຂຶ້ນຢ່າງວ່ອງໄວນັ້ນ ບັນດາອົງການຈັດຕັ້ງ ແລະ ໂຄງການຕ່າງໆ ( ລັດຖະບານ, NGOs, ພາກສ່ວນເອກະຊົນ ແລະ ຊຸມຊົນຕ່າງໆ ) ໄດ້ເລັງເຫັນຄວາມຈະເປັນໃນການປັບປຸງລະບົບຂໍ້ມູນຂ່າວສານຕ່າງໆ ແລະ ຊ່ອງທາງໃນການສື່ສານລະຫວ່າງກຸ່ມ ແລະ ພາຍໃນກຸ່ມຜູ້ປະຕິບັດການຫລັກໃນລາວກ່ຽວກັບ ລະບົບຂໍ້ມູນຂ່າວສານທາງດ້ານຄວາມຮູ້ ແລະ ການກະສິກຳ[1] ( ສູນກາງ, ແຂວງ, ເມືອງ, ຊາວນາ ແລະ ພໍ່ຄ້າ ). ຊຶ່ງໃນປັດຈຸບັນໄດ້ມີການລິເລີ່ມນຳໃຊ້ເຕັກນິກການສື່ສານຕ່າງໆແບບໃໝ່ ໃນທົ່ວປະເທດ ແຕ່ບໍ່ໄດ້ມີການນຳມາແລກປ່ຽນກັນຢ່າງກວ້າງຂວາງເທື່ອ.

ກອງປະຊຸມສຳມະນາຄັ້ງນີ້ຈັດຂຶ້ນ ເພື່ອກຳນົດຮູບແບບການສື່ສານ[2] ທີ່ແທດເໝາະໃນຊົນນະບົດ ແລະ ການພັດທະນາຂໍ້ມູນຂ່າວສານໃນ ລາວ ລວມທັງ ສ້າງແຜນການເພື່ອເຮັດ

ແນວໃດໃຫ້ເກີດມີການ ພັດທະນາຂໍ້ມູນຂ່າວສານຕ່າງໆ ແລະ ນຳຂໍ້ມູນດັ່ງກ່າວລົງສູ່ຊຸມຊົນ ເພື່ອສະຫນັບສະຫນູນວຽກງານການຜະລິດກະສິກຳ ແລະ ຄຸ້ມຄອງຊັບພະຍາກອນທຳມະຊາດ. ກອງປະຊຸມສຳມະນາໃນຄັ້ງນີ້ຈະສຸມໃສ່ ການກຳນົດຮູບແບບການສື່ສານແບບສອງທາງ ທີ່ໄດ້ຮັບຜົນດີທີ່ສຸດທີ່ໃນໄລຍະຜ່ານມາ ເພື່ອກຳນົດຂະບວນການເພື່ອເຮັດໃຫ້ຊາວກະສິກອນ ແລະ ກຸ່ມຜະລິດຕ່າງໆ ມີສ່ວນຮ່ວມ ແລະ ກະຕືລືລົ້ນໃນນການກຳນົດ ແລະ ຜະລິດຂໍ້ມູນຂ່າວສານຂອງພວກເຂົາເອງ.

## ຈຸດປະສົງ ແລະ ຜົນໄດ້ຮັບ:

ຈຸດປະສົງຂອງກອງປະຊຸມເພື່ອ:

- ແລກປ່ຽນຜົນສຳເລັດ ແລະ ບົດຮຽນຕ່າງໆທີ່ຖອດຖອນໄດ້ກ່ຽກັບວຽກງານການສື່ສານໃນຊົນນະບົດ ທີ່ເຫມາະສົມສຳລັບສະພາບການຂອງປະເທດລາວ.
- ສ້າງຕັ້ງເຄືອຂ່າຍຂອງອົງການຈັດຕັ້ງຕ່າງໆທີ່ເຮັດວຽກໃນຂະແຫນງກະສິກຳ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດທີ່ສົນໃຈໃນການປັບປຸງຂະບວນການສື່ສານ ແລະ ຂໍ້ມູນຂ່າວສານ ໃນລະດັບເມືອງ ແລະ ບ້ານ.
- ພັດທະນາແຜນປະຕິບັດການເພື່ອຮ່ວມກັນຜະລິດເນື້ອໃນໃດຫນຶ່ງ ກ່ຽວກັບກະສິກຳ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດ ( ສິດນຳໃຊ້ທີ່ດິນ, ຂໍ້ມູນ ຂ່າວສານທາງດ້ານເຕັກນິກ, ການຕະຫລາດ )

**ໃນຕອນທ້າຍຂອງກອງປະຊຸມ ຄາດຫວັງວ່າພວກເຮົາຈະ:**

- ໄດ້ກຳນົດ ຮູບແບບການປະຕິບັດທີ່ໄດ້ຮັບຜົນດີທີ່ສຸດ, ວິທີການແບບໃຫມ່ເພື່ອປັບປຸງການເຜີຍແຜ່ ແລະ ການສື່ສານໃນຊົນນະບົດ ແລະ ອຸປະສັກຂອງລະບົບຂໍ້ມູນຂ່າວສານໃນປັດຈຸບັນ.
- ໄດ້ຈັດຕັ້ງກຸ່ມປະຕິບັດງານຂະຫນາດນ້ອຍຂອງອົງການຈັດຕັ້ງຕ່າງໆທີ່ສົນໃຈຫົວຂໍ້ທີ່ແຕກຕ່າງກັນໃນດ້ານກະສິກຳ ແລະ ຄຸ້ມຄອງຊັບພະຍາກອນທຳມະຊາດ ເພື່ອ:
    - ກຳນົດລາຍການເບື້ອງຕົ້ນຂອງຂໍ້ມູນທີ່ຕ້ອງການ ແລະ ຂໍ້ມູນທີ່ມີຢູ່ແລ້ວ.
    - ພັດທະນາຍຸດທະສາດສຳລັບຜະລິດເນື້ອໃນຂໍ້ມູນທັງໃນລະດັບປະເທດ ແລະ ລະດັບແຂວງ ແລະ ເມືອງ.
    - ສ້າງແຜນປະຕິບັດການສຳລັບສືບຕໍ່ວຽກ
- ເຂົ້າໃຈບົດບາດຂອງຜູ້ປະຕິບັດການໃນລະດັບທີ່ຕ່າງກັນ ແລະ ພວກເຂົາສາມາດເຮັດວຽກຮ່ວມກັນໄດ້ແນວໃດ.
- ບົດລາຍງານຫຍໍ້ກ່ຽວກັບບົດຮຽນທີ່ຖອດຖອນໄດ້ ແລະ ຂັ້ນຕອນຕໍ່ໄປ ( ເປັນໄປໄດ້ບໍ່ເປັນວີດີໂອ ?)
- CD ລວບລວມບົດນຳສະເຫນີທັງໝົດ ແລະ ບົດຮຽນທີ່ໄດ້ຈາກກອງປະຊຸມ.

**ປະເດັນສຳຄັນ ແລະ ຫົວຂໍ້ທີ່ກອງປະຊຸມຈະໃຫ້ຄວາມສຳຄັນ:**




**ກອງປະຊຸມຈະເລັ່ງໃສ່ສາມຂະແໜງການຫລັກຂອງການສື່ສານໃນຊົນນະບົດ:**

- ***ການພັດທະນາເນື້ອໃນ:*** ວິທີການພັດທະນາເນື້ອໃນກ່ຽວກັບຂະແໜງການທີ່ແຕກຕ່າງກັນ (ສິດກ່ຽວກັບທີ່ດິນ, ເຕັກນິກ, ການຕະຫລາດ) ໂດຍເນັ້ນໃສ່ການລົມນະລົງໄລຍະຍາວ ຫລື ເນັ້ນໃສ່ປະເດັນ ແລະ ຂໍ້ມູນຂ່າວສານໄລຍະສັ້ນ. ຈະເຂົ້າໃຈຄວາມຕ້ອງການ ຂອງຊາວນາ ແລະ ກຸ່ມຊາວນາໄດ້ແນວໃດ.
- ***ກົນໄກການສົ່ງຂໍ້ມູນ:*** ກົນໄກການສື່ສານປະເພດໃດທີ່ໄດ້ນຳໃຊ້ໃນປະເທດລາວ ແລະ ບົດຮຽນທີ່ຖອດຖອນໄດ້ແມ່ນຫຍັງ. ລວມທັງການນຳໃຊ້ ຄອມພິວເຕີ້, ວິດທະຍຸ, ໂທລະທັດ, ກຸ່ມລະຄອນ, ແຜ່ນໂປສເຕີ, ໂທລະສັບ, ການສົ່ງຂໍ້ຄວາມ SMS, Cell Phones, ອື່ນໆ.
- ***ການສ້າງກຸ່ມກະຈາຍຂໍ້ມູນ:*** ນຳໃຊ້ກຸ່ມການຜະລິດ, ກຸ່ມຊາວໜຸ່ມ, ກຸ່ມລະຄອນ, ກຸ່ມຮັບຟັງເພື່ອພັດທະນາລະບົບຂໍ້ມູນຂ່າວສານທ້ອງຖິ່ນ.

**ກອງປະຊຸມກໍ່ຈະໄດ້ສຸມໃສ່ຄຳຖາມດັ່ງຕໍ່ໄປນີ້ເຊັ່ນກັນ:**

- ມີເນື້ອໃນກ່ຽວກັບຫຍັງແດ່ທີ່ໄດ້ຖືກຜະລິດ ? ແມ່ນຫຍັງທີ່ເປັນບົດຮຽນຫລັກ ແລະ ສິ່ງທ້າທາຍໃນ ການພັດທະນາເນື້ອໃນໃນລະດັບທີ່ຕ່າງກັນ?
- ແມ່ນຫຍັງທີ່ເປັນວິທີການໃໝ່ໃນການເຜີຍແຜ່ຂໍ້ມູນຂ່າວສານ: ເຄື່ອງມືສື່ສານໃຫມ່ຫຍັງແດ່ທີ່ຖືກນຳໃຊ້ (ວິດທະຍຸ, ໂທລະຊັບ, ຄອມພິວເຕີ, ອື່ນໆ)
- ພວກເຮົາຈະສາມາດສ້າງຊ່ອງທາງສະທ້ອນກັບຂໍ້ມູນລະຫວ່າງລະດັບທີ່ຕ່າງກັນໄດ້ ແນວໃດ ແລະ ຈະເບິ່ງການສື່ສານເປັນການເຮັດກິດຈະກຳຕອບໂຕ້ຊຶ່ງກັນແລະກັນລະຫວ່າງ ຜູ້ດຳເນີນ ການໃນລະດັບທີ່ຕ່າງກັນຫລາຍກວ່າເປັນພຽງຂະບວນການເອົາຂໍ້ມູນໃຫ້ກັບ ຊາວນາ ແລະ ກຸ່ມຊາວນາພຽງຢ່າງດຽວແນວໃດ ?.
- ຜູ້ດຳເນີນການມີບົດບາດຫຍັງແດ່ ໃນລະດັບທີ່ຕ່າງກັນ ( ປະເທດ,ແຂວງ, ເມືອງ)?
- ເນື້ອໃນຫຍັງແດ່ທີ່ໄດ້ຖືກພັດທະນາໃນປັດຈຸບັນໃນລະດັບບ້ານ/ເມືອງ (ຖ້າມີ) ?

  - ແມ່ນໃຜເປັນຜູ້ພັດທະນາ/ຜະລິດມັນຂຶ້ນ ແລະ ຍ້ອນຫຍັງ? ຜູ້ນຳໃຊ້, ຊາວນາ, ອື່ນໆ ໄດ້ຜະລິດເນື້ອໃນດ້ວຍຕົວພວກເຂົາເອງແທ້ບໍ ? ຖ້າເປັນດັ່ງນັ້ນ ສິ່ງເຫລົ່ານີ້ສາມາດກ່ຽວຂ້ອງກັບຢ່າງອື່ນໆໄດ້ບໍ່ ? ( ຂໍ້ມູນຂ່າວສານ ແລະ ການປະຕິບັດ )
  - ຖ້າການພັດທະນາເນື້ອໃນແບບ "ແຕ່ລຸ່ມຂຶ້ນເທິງ" ນີ້ ບໍ່ໄດ້ມີການສ້າງຂຶ້ນ ຍ້ອນຫຍັງ ? ສິ່ງນີ້ຈະຖືກປຸ່ງແປງໄດ້ແນວໃດ ?
  - ມັນມີຄວາມແຕກຕ່າງຫຍັງລະຫວ່າງການພັດທະນາເນື້ອໃນແບບ "ແຕ່ລຸ່ມຂຶ້ນເທິງ", ໃນລະດັບ ບ້ານ/ເມືອງ ແລະ ການພັດທະນາເນື້ອໃນ "ແຕ່ເທິງລົງລຸ່ມ" ຫລື ໂດຍ "ຜູ້ຊ່ຽວຊານ" ?
  - ແມ່ນຫຍັງທີ່ເປັນຄຸນຄ່າຂອງຄວາມຮູ້ທ້ອງຖິ່ນ/ບ້ານ ໃນດ້ານຂໍ້ມູນການກະເສດ ແລະ ມີຫຍັງແດ່ທີ່ໄດ້ເຮັດສຳເລັດແລ້ວ ແລະ ໄດ້ມີການບັນທຶກໄວ້ບໍ່ ? ແລະ ທ່ານຈະບອກແນວໃດວ່າ ມັນເປັນປະໂຫຍດ ແລະ ສາມາດນຳໄປໃຊ້ໃນລະດັບທ້ອງຖິ່ນ /ຊາວນາໄດ້. ດັ່ງນັ້ນ ທ່ານຈະໃຊ້ຄວາມພະຍາຍາມປະສົມປະສານລະຫວ່າງເນື້ອໃນ ທາງດ້ານຄວາມຮູ້ທ້ອງຖິ່ນ ກັບເນື້ອໃນທີ່ໄດ້ພັດທະນາຂຶ້ນໃນລະດັບປະເທດ ຫລື ໂດຍຜູ້ຊ່ຽວຊານແນວໃດ ?
- ຈະສາມາດເຂົ້າເຖິງກຸ່ມຊົນເຜົ່າທີ່ແຕກຕ່າງກັນ ແລະ ນຳໃຊ້ພາສາຊົນເຜົ່າດັ່ງກ່າວນັ້ນໄດ້ແນວໃດ ?
- ບົດບາດຂອງກຸ່ມຊາວນາ, ກຸ່ມໄວໜຸ່ມ, ກຸ່ມຜູ້ຟັງ ຫລື ກຸ່ມຊຸມຊົນ ແມ່ນຫຍັງ ຕໍ່ກັບການນຳໃຊ້, ການຜະລິດ ເນື້ອໃນ ຫລື ຕໍ່ກັບການຕອບສະໜອງຂໍ້ມູນສະທ້ອນກັບ.

## ຂະບວນການປະຊຸມ ແລະ ກຳນົດການ:

ກອງປະຊຸມຈະໃຊ້ເວລາ 2 ວັນ ຊຶ່ງເນື້ອໃນກອງປະຊຸມປະກອບດ້ວຍການປະສົມ ປະສານລະຫວ່າງການນຳສະເໜີ, ການວາງສະແດງຕະຫລາດຂໍ້ມູນຕ່າງໆ ແລະ ການເຮັດວຽກເປັນກຸ່ມຍ່ອຍ. ກອງປະຊຸມຈະນຳໃຊ້ວິທີການມີສ່ວນຮ່ວມເພື່ອໃຫ້ແນ່ໃຈໃຫ້ເກີດມີການປະກອບສ່ວນຢ່າງຫ້າວຫັນຂອງບັນດາຜູ້ເຂົ້າຮ່ວມທັງໝົດ. ຂະບວນການຈັດກອງປະຊຸມໂດຍລວມໄດ້ສະແດງໄວ້ໃນພາບຂ້າງລຸ່ມນີ້:

ມື້ທີ1: ກຳນົດສະພາບການ

- ພາກແນະນຳ ແລະ ພິທີເປີດ
- ການດຳເນີນການທີ່ດີ ແລະ ວິທີການໃຫມ່ຂອງທ້ອງຖິ່ນ (ການພັດທະນາເນື້ອໃນ, ກົນໄກການສົ່ງຂໍ້ມູນ, ກຸ່ມທ້ອງຖິ່ນ)
- ຕະຫລາດຂໍ້ມູນ
- ເຮັດວຽກກຸ່ມຍ່ອຍໃນ3 ຂະແໜງການ:
  1. ສິດຕໍ່ທີ່ດິນ
  2. ຂໍ້ມູນດ້ານເຕັກນິກວິຊາການ
  3. ຂໍ້ມູນດ້ານການຕະຫລາດ

→

ມື້ທີ2: ຈັດຕັ້ງເຄືອຂ່າຍຜູ້ຕອບສະໜອງຂໍ້ມູນ

- ຮູບແບບການສື່ສານຊົນນະບົດທີ່ດີທີ່ສຸດໃນເຂດພາກພື້ນ/ໃນໂລກ ແລະ ຈາກຂະແໜງການອື່ນໆ
- ການເຮັດວຽກກຸ່ມຍ່ອຍ: ພັດທະນາແຜນປະຕິບັດການສຳລັບການຕິດຕາມ ແລະ ການພັດທະນາເນື້ອໃນ
- 

## ໃຜຄວນເຂົ້າຮ່ວມ?

ກອງປະຊຸມໄດ້ເລັງໃສ່ກຸ່ມຜູ້ທີ່ເຮັດວຽກກ່ຽວກັບການສື່ສານໃນຊຸມຊົນນະບົດ ໃນຂະແໜງກະສິກໍາ-ປ່າໄມ້. ຄາດວ່າຈະມີຜູ້ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ປະມານ 100 ຄົນ, ຊຶ່ງ ກຸ່ມຊຸມຊົນ, ກຸ່ມໄວໜຸ່ມ ຫລື ກຸ່ມຊາວນາ ກໍ່ສົ່ງເສີມໃຫ້ເຂົ້າຮ່ວມໃນກອງປະຊຸມນີ້ເຊັ່ນກັນ. ໃນນີ້ ຜູ້ເຂົ້າຮ່ວມກອງປະຊຸມທຸກພາກສ່ວນ ຄວນຈະປະກອບສ່ວນໃນຕະຫລາດຂໍ້ມູນໂດຍການສະແດງຂໍ້ມູນຕ່າງໆທີ່ຕົນເອງມີ ອາດຈະເປັນ ວີດີໂອ, ການວາງສະແດງ, ການສະແດງ ຕ່າງໆ ແລະ ວິທີການອື່ນໆແບບມີສ່ວນຮ່ວມ ເພື່ອສະແດງໃຫ້ຮູ້ວ່າ ທ່ານເຮັດຫຍັງແດ່ ?